ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຫ້ອງການ ທຫລ ຈັດຕັ້ງເຜີຍແຜ່ ເອກະສານວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 67 ປີ



ໃນຕອນເຊົ້າຂອງວັນທີ 28 ເມສາ 2022 ນີ້ ຫ້ອງການທະນາຄານແຫ່ງ ສປປລາວ ໄດ້ຈັດຕັ້ງເຜີຍແຜ່ ເອກະສານວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 67 ປີ (ວັນທີ 22 ມີນາ 1955 - 22 ມີນາ 2022) ໂດຍການໃຫ້ກຽດເຂົ້າຮ່ວມ ແລະ ບັນຍາຍຂອງ ທ່ານ ຄຳວົງ ທິບພະວົງ ຮອງຜູ້ອຳນວຍການ ທຫລ ພ້ອມນີ້ກໍ່ມີ, ຜູ້ຊ່ວຍຄະນະຜູ້ອຳນວຍການ, ຫົວໜ້າກົມ-ຮອງກົມ, ຄະນະພະແນກ ແລະ ວິຊາການເຂົ້າຮ່ວມຢ່າງພ້ອມພຽງ.



ໃນທີ່ປະຊຸມຜູ້ເຂົ້າຮ່ວມໄດ້ຮັບຟັງການທວນຄືນປະຫວັດຄວາມເປັນມາຂອງພັກປະຊາຊົນປະຕິວັດລາວ ແລະ ໝາກຜົນແຫ່ງການຊີ້ນຳໆພາຕະຫຼອດໄລຍະກຳອຳນາດຂອງພັກ ລວມທັງການນຳພາປະເທດຊາດກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ; ພ້ອມດຽວກັນນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການລາຍງານໝາກຜົນການຊີ້ນຳໆພາວຽກງານຮອບດ້ານຂອງຄະນະພັກ ທຫລ ປະຈຳປີ 2021 ແລະ ທິດທາງປີ 2022 ທີ່ລາຍງານໂດຍທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ ແລະ ສະພາບການເຄື່ອນໄຫວວຽກງານຂອງຫ້ອງການ ທຫລ ຕະຫຼອດໄລຍະ 4 ເດືອນຂອງ ປີ 2022 ເຊິ່ງລາຍງານໂດຍ ທ່ານ ສາຍສະໝອນ ກິບເກສອນ ຮອງຫົວໜ້າຫ້ອງການ ທຫລ.

ການຈັດຕັ້ງເຜີຍແຜ່ດັ່ງກ່າວແມ່ນໄດ້ດຳເນີນໄປເປັນເວລາເຄິ່ງວັນ.

# ພາບຂ່າວ: ສົມອົກ ເຄນຄຳແພງ





*ຢູ່ເມືອງລາວ ໃຊ້ແຕ່ເງິນກີບ*